ໂຊມກະວີ ກອນທຳນແຫລ່ ແລະ ກາບເຊີ້ງ

# ຮອຍຍິ້ມລູກ ຄວາມສຸກແມ່

ໂດຍ :

ຊາຍດອນໃຕ້

ລູກດອນກະເດັນ

ໂຮມກະວີ ກອນເທດແຫລ່ ແລະ ກາບເຊີ້ງ

# ຮອຍຍິ້ມລູກ ຄວາມສຸກແມ່

ໂດຍ :

ຊາຍດອນໃຕ້
ລູກດອນກະເດັນ

[illegible] ພຣະໄພວັນ [illegible]

[illegible] 2014

ຈັດພິມໂດຍ :

ຫ້ອງສະໝຸດຄອບຄົວ ເພື່ອພັດທະນາການອ່ານຊຸມຊົນ ເພື່ອການກຸສົນ
(ຊາຍດອນໃຕ້)

2014

ບຸນສິງ ແກ້ວບົວສາຍ

# ຄະນະຈັດທຳ

ຊື່ປຶ້ມ : ຮອຍຍິ້ມລູກ ຄວາມສຸກແມ່

ຂຽນໂດຍ : ❶ ຊາຍດອນໃຕ້
❷ ລູກດອນກະເດັນ

ບັນນາທິການ : ❶ ພຣະ ໄພວັນ ມາລາວົງ

ພິສູດອັກສອນ : ❶ ພຣະ ຈັນທະວິສຸກ ລັດຕະນາ
❷ ສາມະເນນ ຄຳພຸດ ເທບພະນົມ

ອອກແບບ-ຈັດໜ້າ : ❶ ທອງເດືອນ ທຳມະວົງ

ຕີພິມ : ❶ ບຸນສົ່ງ ແກ້ວບົວສາຍ

---

ພິມທີ່ : ໂຮງພິມ ຮ່ວມມິດການພິມ
ຂະໜາດພິມ : 14 X 20 ຊມ
ຈຳນວນໜ້າ : 184
ພິມຄັ້ງທີ : I
ຈຳນວນພິມ : 1,000 ຫົວ
ທະບຽນພິມ : 022 ພຈ 17012014
ISBN : 978-9932-00-134-7

# ສາລະບານ

ຄຳນຳ 7

ບຸນສິ່ງ ແກ້ວບົວສາຍ

## ກະວີ ສາຍດອກໄມ້


1. ບຸນເຂົ້າປະດັບດິນ-ປະດັບໃຈ 11
2. ຫອມເຂົ້າໃໝ່ ປາເຂົ້າໄຊ 14
3. ຢາບ້າພາເພ 16
4. ທ່ຽວກາງຄືນມີໂທດ 6 ຢ່າງ 19
5. ມູນເຫດແຫ່ງການຜິດຖຽງກັນ 21
6. ກາຝາກສັງຄົມ 23
7. ສາວບາງລືມນາ 26
8. ງູເຫົ່າບໍ່ຖິ້ມສັນດານ 29
9. ພັນລະຍາ 7 ປະການ 32
10. ປົກປັກຮັກສາ 2 ທັນວາ 34
11. ຮັກກອງທັບແມ່ນຮັກຊາດ 36


ບຸນສິ່ງ ແກ້ວບົວສາຍ

## ກອນເທດແຫລ່ ສາຍດອນໄຕ


| | | |
|---|---|---|
| 12. | ນ້ຳໃຈຜົວພິການ | 39 |
| 13. | ຂໍເປັນກຳລັງໃຈແດ່ຜູ້ພິການທຸກຄົນ | 44 |
| 14. | ສຽງຈາກຄົນພິການ | 50 |
| 15. | ຂໍສາຍທານນ້ຳໃຈໃຫ້ສັດທາ ຄ່າແຂນຂາທຽມແດ່ຄົນພິການ | 54 |
| 16. | ການມີຊີວິດຢູ່ລອດຈາກລູກລະເບີດ | 57 |
| 17. | ປະຫວັດພຣະອາຈານ ມະຫາປານ ອານັນໂທ | 62 |
| 18. | ມະຫາປານ ອານັນໂທ ຍັງບໍ່ຕາຍ | 71 |


## ກາບ ສາຍດອນໄຕ


| | | |
|---|---|---|
| 19. | ກາບ 7 ເຊີ້ງບຸນພຣະເຫວດ | 78 |
| 20. | ກາບ 8 ເຊີ້ງບຸນພຣະເຫວດ (ກ້ຽວບ່າວ-ສາວ) | 80 |
| 21. | ກາບ 7 ກາບຕົດ | 82 |
| 22. | ກາບ 7 ຕັກກະແຕນດຸໝັ່ນ | 84 |
| 23. | ກາບ 7 ກາບສັນລະເສີນຄຸນແມ່ | 86 |
| 24. | ກາບ 7 ຄຳສຳລັບເຊີ້ງບັ້ງໄຟ | 89 |
| 25. | ກາບ 7 ຄຳສຳລັບເຊີ້ງຊ່ວງເຮືອ | 93 |
| 26. | ກາບ 8 ຄຳສຳລັບເຊີ້ງຊ່ວງເຮືອ | 96 |

| | | |
|---|---|---|
| 27. | ດອກບົວ | 98 |
| 28. | ທວງສັນຍາບຸນທາດຫລວງ | 100 |
| 29. | ບົວກັບຕົມ | 103 |
| 30. | ດອກໄມ້ກັບຊີວິດ | 106 |
| 31. | ຄອຍນ້ອງແຄມເຊກອງ | 110 |
| 32. | ຄອງຮັກ ຄອງເຮືອນ ຄອງທຳ | 114 |
| 33. | ເປີດວາດອັກສອນ "ມໍ" | 116 |
| 34. | ພຣາມ ແລະ ພຸດທະ | 120 |
| 35. | ພຸດທະສາດ...ໄສຍະສາດ | 122 |
| 36. | ສາວລາວສາວງາມ | 124 |
| 37. | ຕຳນານວິລະກຳຄົນລາວ | 128 |
| 38. | ອາໄລຮັກ ອາໄລຫາ ຕົ້ນໄມ້ມະນີໂຄດ | 134 |
| 39. | ກະວີ ກະວາດ ນັກປາດກະວີ | 136 |
| 40. | ຄົນກະວີ ຄົນກະວີ | 139 |
| 41. | ຄອງເຫງົາເຂົາບໍ່ແລ | 142 |
| 42. | ສັນຍາເມື່ອນາປີ | 144 |
| 43. | ຖຽງນາ ແລະ ຕາເວັນ | 147 |
| 44. | ບ້ານເກີດເມືອງນອນ | 149 |

45. ປະເພນີຮີດ 12 ຂອງລາວ 153
46. ປາຍຝົນຕົ້ນໜາວ ບ່າວຄອຍຮັກ 157
47. ຜົນຮ້າຍຢາເສບຕິດ 160
48. ຫ່ວງນ້ອງສາວທຳພັກ 162
49. ຮອຍຍິ້ມລູກ ຄວາມສຸກແມ່ 166
50. ເຊີນຢາມບ້ານອ້າຍແດ່ 169
51. ຢ່າລືມເປັນມະນຸດ 172

# ຄຳນຳ

ການຈັບປາຍປາກກາມາຂຽນມັນບໍ່ໄດ້ງ່າຍຄືຄົນຄິດກັນ ໂດຍສະເພາະການຂຽນບົດກະວີ ກາບກອນ ມັນຕ້ອງມີສິລະປະແນບນຽນສູນທະລິຍະງົດງາມປານິດບັນຈົງທີ່ສຸດ. ການຈະເວົ້າຫຍັງກໍຕ້ອງໃຊ້ສິລະປະເລີກເຊິ່ງ ບໍ່ວ່າ ສູນທະລິຍະທັງຄຳ ທັງຄວາມ ແລະເນື້ອຫາປະກອບເຂົ້າກັນ ອັນນີ້ຄືຈຸດເດັ່ນຂອງບົດກະວີ.

ຄຳວ່າ "ກະວີ" ແປວ່າ ຖ້ອຍຄຳຂອງນັກປາດທີ່ມ່ວນ ອອນຊອນ ລະອຽດອ່ອນ ເຊື່ອງຊ້ອນປັດຊະຍາເລີກເຊິ່ງໃນບົດນັ້ນໆ. ໃນພຸດທະສາສະໜາກ່າວເຖິງກະວີມີ 4 ປະເພດຄື:

**ຈິນຕະກະວີ** : ແຕ່ງຕາມຄວາມຄິດ ຈິນຕະນາການ ຂອງຕົນເອງ

**ສຸຕະກະວີ**: ແຕ່ງຕາມໄດ້ຟັງມາຈາກຄົນອື່ນ

**ອັດຖະກະວີ**: ແຕ່ງຕາມຄວາມເປັນຈິງ

**ປະຕິພານກະວີ**: ແຕ່ງຕາມຄວາມຮູ້ທີ່ເກີດຂຶ້ນສະເພາະໜ້າ.

ປຶ້ມກະວີຊຸດ "ຮອຍຍິ້ມລູກ ຄວາມສຸກແມ່" ເປັນຜົນງານຂອງສອງນາມປາກກາ ລະຫວ່າງອາຈານກັບລູກສິດຄື **"ຊາຍດອນໃຕ້"** ແລະ **"ລູກດອນກະເດັນ"**. ທ່ານຜູ້ອ່ານຄົງຈະເຄີຍຜ່ານຕາເຫັນມາແລ້ວຕາມໜ້າໜັງສືພິມລາຍວັນ. ອາຕະມາກ້າເວົ້າອອກຈາກປາກ

ໂລດວ່າ ກ່ອນຈະຂຽນກະວີ ກາບກອນ ເປັນດ້ວຍບຸນຄຸນປາລະມີ ເປັນຢ່າງສູງຄືໄດ້ຮ່ຳຮຽນ ວິທີແຕ່ງກາບກອນນຳອາຈານມະຫາບຸນເຕີມ ສີບຸນເຮືອງ ຕະຫລອດຮອດວິທີຄົ້ນຄວ້າ ແລະ ຮັກໃນການອ່ານໜັງສືຕ່າງໆ ຈົນເປັນນິໄສມາຈົນເຖິງປັດຈຸບັນ.

ໂຮມກະວີຊຸດນີ້ເປັນຫົວທຳອິດທີ່ຮ່ວມກັນນັບວ່າເປັນກຸສົນຢ່າງຍິ່ງທີ່ມີໂອກາດໄດ້ໂຮມກະວີ ແລ້ວຈັດພິມເປັນເຫລັ້ມອອກມານຳກະວີອາຈານຂອງຕົນເອງ. ກະວີສ່ວນຫລາຍທີ່ມາຈັດໄວ້ນີ້ ເຄີຍອອກໜັງສືພິມ ວາລະສານຕ່າງໆ ມາແລ້ວ. ກະວີທີ່ນຳມາພິມເປັນເຫລັ້ມນີ້ແມ່ນຂຽນມາເປັນເວລາຫລາຍປີແລ້ວຄັດເອົາເລັກໆ ນ້ອຍໆ ເທົ່ານັ້ນ ເພາະອາຕະມາເອງກໍຂຽນກະວີມາແຕ່ຮຽນມັດທະຍົມຕອນຕົ້ນ ກໍຄ່ອຍໆ ປັບປຸງຮ່ຳຮຽນຈາກຄູອາຈານຫຼາຍໆ ທ່ານເຊັ່ນ: ດຣ. ທອງຄຳ ອ່ອນມະນີສອນ, ພ. ພວງສະບາ, ດາວວຽງ ບຸດນາໂຄ ເປັນຕົ້ນ.

ກະວີອາດຈະມີຫລາກຮູບແບບລວມທັງກາບເຊີ້ງ ແລະ ແຫລ່ນຳອີກ ເນື້ອໃນຫລາກຫລາຍ ເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ອ່ານທີ່ຈະໄດ້ສຳຜັດລົດຊາດກະວີທີ່ມີເອກະລັກສະເພາະຕົນລະຫວ່າງອາຈານ ແລະ ລູກສິດດ້ວຍສຳນວນ ສິລະປະ ລີລາຄົມປາກກາພາສາສິນ. ສ່ວນຫລາຍກະວີກໍເອ່ນໄປທາງທຳ ເພື່ອປູກຈິດສຳນຶກ ຄຸນນະທຳ ຈະລິຍະທຳ ເຮັດແຕ່ຄວາມດີ ລະຖິ້ມຄວາມຊົ່ວ ແລະໃຫ້ມີໃຈບໍລິສຸດຂາວສະອາດ. ໃຫ້ລູກຫລານເຍົາວະຊົນຮູ້ຈັກຮັກຮີດຄອງປະເພນີ ວັດທະນະທຳອັນດີງາມຂອງຊາດໂດຍສະເພາະຕອບແທນບຸນຄຸນພໍ່ແມ່ ຜູ້ບັງເກີດເກົ້າ ແລະຜືນແຜ່ນດິນບ້ານເກີດ

24 / VII
ຫ້າມຈຳໜ່າຍ

ເມືອງນອນທີ່ແສນເຄົາລົບຮັກ.

ຫວັງເປັນຢ່າງຍິ່ງວ່າປຶ້ມ "**ຮອຍຍິ້ມລູກ ຄວາມສຸກແມ່**" ຄົງຈະເປັນເພື່ອນຄິດໃນຍາມເຫງົາ ແລະຄົງບໍ່ປາສະຈາກການຂາດຕົກບົກຜ່ອງ ກໍຕ້ອງຂໍອະໄພນຳທ່ານຜູ້ອ່ານໄວ້ໃນໂອກາດນີ້ດ້ວຍ.

ວິທະຍາໄລສົງອົງຕື້ ວັນທີ 07/01/2014

**ພຣະໄພວັນ ມາລາວົງ**

# ກະວີ

ຊາຍດອນໃຕ້

# ບຸນເຂົ້າປະດັບດິນ–ປະດັບໃຈ

❀ ຮີດ 12 ຕັ້ງແຕ່ເຄົ້າ
ເປັນຮີດຄອງ 12 ເດືອນ
ປະດັບດິນຕົກເດືອນເກົ້າ
ຄືບກັບເດືອນສິງຫາ

❀ ປະດັບດິນແມ່ນຫໍ່ເຂົ້າ
ໃນວັດວາອາຮາມ
ຫວັງເພື່ອສັບພະສັດໃຫ້
ມາຮັບເອົາໄປຄືບຄົ້ຽວ

ບູຮານແຕ່ງຕົກມາ
ເພື່ອບຳເພັນກຸສົນສ້າງ
ພໍດີແຮມ14 ຄ່ຳ
ເດືອນສາກົນທີ່ໃຊ້
ດຽວນີ້ຄູ່ກັນ.
ເອົາໄປແຈກຕາມສະຖານ
ພຣະທາດເຈດີດ້ວຍ
ທັງວິນຍານຜີເຜດ
ກິນແກ້ຫອດຫິວ.

❀ ປະດັບສອງແມ່ນແຕ່ງຢ້ອງ ອັນປານິດຈົບງາມ
ຄົບເຄື່ອງແນວອາຫານ ໝູ່ຫວານ-ຄາວພ້ອມ
ຍໍເປັນພານພາເຂົ້າ ຖວາຍສິ່ງປັນແຈກ
ທຳພິທີຂາບໄຫວ້ ຄຸນແກ້ວໜໍ່ພຸດໂທ.

❀ ຮັກສາສິນຮຽບຮ້ອຍ ຟັງເທສະໜາທຳ
ຈາກນັ້ນມາໆປຸນປັນ ຍາດອີງພີ່ງເຊື້ອ
ສາມັກຄີໂຮມເຕົ້າ ສັງສັນປັນແບ່ງ
ຄວາມຮັກແພງຂອງໝູ່ບ້ານ ໃຫ້ເປັນກ້ອນຕ່ອນດຽວ.

❀ ປະດັບສາມ ປະດັບດິນແມ່ນກ້າ ທີ່ເຮົາແຕ່ງດຳນາ
ສ່ຳນີ້ພໍດີງາມ ສະອຸ່ມດຽວດົກດົ້ວ
ແລເບິ່ງທັງເໜືອ-ໃຕ້ ທົ່ງນາງາມເປັນອຸ່ມທຸ່ມ
ພືດຜົນຊຸມໝາກໄມ້ ສວນຮົ້ວທົ່ວທະລັງ.

❀ ຈັ່ງແມ່ນງາມກະດໍ້ ທຳມະຊາດທັງຫລາຍ
ຈັ່ງແມ່ນແສນສວຍງາມ ເຄື່ອງກິນແນວໄມ້
ມັນໄດ້ປະດັບສ້າງ ຜືນດິນແດນດ່ານ
ທົ່ວທຸກທັງໝູ່ບ້ານ ປະດາເອ້ອາດຕາ.

❀ ປະດັບດິນເຮັດໄດ້ ຢ່າລືມຝ່າຍປະດັບໃຈ
ປະດັບດວງສິນ-ທຳ ໃຫ້ແໜ້ນໜາຝາຄັ້ງ
ຊູດເກົ່າໃຈຈັງໄຮຖິ້ມ ມົນທິນກອງກິເລດ
ອະບາຍຍະມຸກ ຄວາມເສົ້າໝອງໝູ່ນັ້ນ ຢ່າມາຄ້າງທີ່ໃຈ.

❀ ປະດັບໃຈ ປະດັບດິນອາດເອ້ ສອງຝ່າຍສະເໝີກັນ
ທັງວັດຖຸ ແລະຈິດໃຈ ໃຫ້ຄູ່ຄຽງຄືງໄວ້
ຈຶ່ງເດີນໄປຢ່າງໜັກແໜ້ນ ເຖິງຄວາມເຮືອງຮຸ່ງ
ຫາກເບົາ-ໜັກ ສອງຝ່າຍເບື້ອງ ຂວາ-ຊ້າຍຊິບໍ່ດີ ແທ້ໃດ.

❀ ໃຈໃຫ້ເປັນດັ່ງແກ້ວ ຮັກຮໍ່ປະເພນີ
ແນວດີໆຂອງລາວ ໃຫ້ໄຂສະແດງໄວ້
ຢ່າໄດ້ຮຽນເອົາເບື້ອງ ປະເພນີຂອງເພິ່ນ
ຮັບອັນດີ ໃຫ້ແນວດີເພິ່ນວ່າສ້າງ ປະດັບຄ້າງຄູ່ໃຈ ແທ້ເນີ.

# ຫອມເຂົ້າໃໝ່ ປາເຂົ້າໄຊ

❀ ເດືອນ 11 ຟ້າຮ້ອງປ້ຽງ
ເຫ-ມັນຕະມາເຖິງ
ເຂົ້າດໍສີເຫລືອງແລ້ວ
ເຕັມທົ່ງທາມໃຫຍ່ກວ້າງ

ສຽງສົ່ງລະດູຝົນ
ອາກາດໜາວເຢັນຈ້ອຍ
ກາງນາເປັນອາລ່າມ
ຊາວນາກູ້ກ່ຽວກໍາ.

❀ ເອົາໄປຕໍາມາໜຶ້ງ
ປູປາລອຍລົງຂອງ
ຝູງຊາວນາປັກຕ້ອນ
ລົງໄປຄາຢູ່ຕ້ອນ

ຫອມອ່ອນສະອອນເດ
ລ່ອງຕາມລໍາຫ້ວຍ
ຕັນທາງປາລ່ອງ
ກໍເລີຍເຂົ້າຢູ່ໄຊ.

❀ ເກີນສະອອນເອີາແທ້ ແລນາຫລຽວຫລ່ຳ
ປີ້ງປາມັນ ເຂົ້າໃໝ່ພ້ອມ ຫອມກຸ້ມກ່ອມກັນ.

❀ ຟັງສຽງລຳຈັ້ນໆ ປະພັນແຕ່ງກອນສົດ
ຂອງໜຸ່ມສາວຊາວນາ ໃສ່ຜະຫຍາດັງກ້ອງ
ທ້ອງທົ່ງນາຍາມນີ້ ມີຊີວາສົດຊື່ນ
ອ້າຍບ່າວກໍຫອບຫິ້ວ ຂົນເຂົ້າຂຶ້ນໃສ່ລານ.

❀ ໃນທົ່ວທຸກໝູ່ບ້ານ ທ້ອງຖິ່ນດິນລາວ
ພ້ອມໃຈກັນເກັບກຳ ເຂົ້າດໍດາຟ້າວ
ແສນສະອອນເຫລືອລົ້ນ ສາມັກຄີເກັບກ່ຽວ
ທັງເຂົ້າໃໝ່ ໃສ່ປາມັນອີກດ້ວຍ ຫອມກຸ້ມທົ່ວເຮືອນ ສະອອນເດ.

# ຢາບ້າເພແພ

❀ ໝົດສົງຄາມເຂັ່ນຂ້າ ປະເທດອື່ນມາຮຸກຮານ
ແຕກຜ່າຍປະເຮືອນຊານ ສິ່ງຂອງທອງໃຊ້
ຜົວ-ເມຍໄປຄົນກ້ຳ ດິນແດນປະເທດອື່ນ
ບາງຄົນຕາຍມອດມ້ຽນ ເມືອຟ້າສູ່ສະຫວັນ.

❀ ການເວລາຜ່ານພົ້ນ ເລື່ອງຄວາມທຸກບັນເທົາລົງ
ນ້ຳຕາຊຶມເຊົາຫາຍ ໄດ້ນັ່ງຫົວບານແຍ້ມ
ລູກ-ຜົວ-ເມຍຊຸມເຂົ້າ ພາດຽວໄດ້ອົບອຸ່ນ
ຍາມແລງຜ້າຫົ່ມຕຸ້ມ ໃນຫ້ອງແຫ່ງດຽວ.

❀ ສິ່ງຄານໃໝ່ໄດ້ເກີດຂຶ້ນ ຍິ່ງແສນທຸກທໍລະມານ
ປານວ່ານອນກອງໄຟ ບໍ່ເຫືອດຫາຍແລງເຊົ້າ
ເປັນດັ່ງຄືບູຮານເວົ້າ ຈາມາຕັ້ງແຕ່ກ່ອນ
ເປີດແຕ່ພໍ້ທ່າກ້ອມ ພັດມາພໍ້ທ່າຫລວງ.

❀ ມີລູກຊາຍແກ່ກ້າ ເປັນບ່າວພອມແຍງ
ເປັນຕິດແນວບໍ່ດີ ກຸ່ມຂະບວນຢາບ້າ
ແຕ່ລະວັນຈາຂ້າ ບິດາພໍ່ ແລະແມ່
ລັກເງິນຄຳເຊື່ອງໄວ້ ບ່ອນໃດນັ້ນກໍບໍ່ຍັງ.

❀ ຍາມໄດ້ກິນໄປເລາະຫລິ້ນ ຫາທ່ຽວກາງຄືນ
ໄປຊຸມເບຍຊຸມສາວ ຄຶກຄະນອງເມືອງລົ້ນ
ເກີດຕີກັນຟັນຂ້າ ເປັນເລື່ອງມາຍາກພໍ່ແມ່
ໄປຫາເລາະໃຊ້ໜີ້ ຄະດີເລື້ອງຢູ່ຊູ່ວັນ.

❀ ນ້ຳຕາແມ່ຢາດຍ້ອຍ ລິນຫລັ່ງບໍ່ມີຢຸດ
ຄອບຄົວເຄີຍຊຸມແຊວ ມ່ວນລະງົມແລງເຊົ້າ
ບັດນີ້ເພພັງມ້າງ ແລງງາຍມາມິດມີ່
ຊຸມພວກອ້າຍ ແລະນ້ອງ ໄປຄືນກ້ຳແກ່ວໄກ.

❀ ຈັ່ງແມ່ນນຳພວກບ້າ ຜະລິດອອກ-ທັງຂາຍ
ຊ່າງກໍ່ກຳທຳເວນ ຢູ່ບໍ່ເຊົາແລງເຊົ້າ
ກຳຈັດເສຍໃຫ້ໝົດສິ້ນ ຈາກຜືນດິນປະເທດຊາດ
ຢ່າໃຫ້ເຫລືອຢູ່ຄ້າງ ໃຫ້ໂຮມຕ້ານຊ່ວຍກັນ ແດ່ເນີ.

24 / VII
ຫ້າມຈຳໜ່າຍ

# ທ່ຽວກາງຄືນມີໂທດ 6 ຢ່າງ

❀ ຢ່າໄດ້ທຸລັງເວົ້າ ຖຽງຄຳເພິ່ນສອນສັ່ງ
ເປັນຄວາມຈິງທ່ຽງແທ້ ເພິ່ນເຫັນແລ້ວຈຶ່ງວ່າມາ.

❀ ໃຜຜູ້ຫວັງກ້າວໜ້າ ເຮືອງຮຸ່ງຊີວິດ
ເປັນຄອບຄົວສົມບູນ ພັດທະນາດີແລ້ວ
1 ຊື່ວ່າເຮົາປະຖິ້ມ ຕົນໂຕບໍ່ຮັກຮໍ່
2 ຊື່ວ່າປະປ່ອຍຖິ້ມ ລູກ-ເມຍນັ້ນບໍ່ຮັກຫອມ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ